ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 208 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 06 ສິງຫາ 2018

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ແນວລາວສ້າງຊາດ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 090/ສພຊ, ລົງວັນທີ 20 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ແນວລາວສ້າງຊາດ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 010/ຄປຈ, ລົງວັນທີ 18 ກໍລະກົດ 2018.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ແນວລາວສ້າງຊາດ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ເລກທີ 090 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 / 06 / 18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍແນວລາວສ້າງຊາດ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍແນວລາວສ້າງຊາດ (ສະບັບປັບປຸງ) ໃນ ວາລະກອງປະຊຸມ ຕອນບ່າຍ, ວັນທີ 20 ມິຖຸນາ 2018.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາ ກົດໝາຍວ່າດ້ວຍແນວລາວສ້າງຊາດ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 49 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 ມິຖຸນາ 2018

# ກົດໝາຍ
# ວ່າດ້ວຍແນວລາວສ້າງຊາດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ຕິດຕາມ ກວດກາ ຂອງແນວລາວສ້າງຊາດ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໃຫ້ມີປະສິດທິຜົນ ແນໃສ່ ເຕົ້າໂຮມຄວາມສາມັກຄີ, ປຸກລະດົມຄວາມຕື່ນຕົວ, ນ້ຳໃຈຮັກຊາດ ຂອງປະຊາຊົນລາວບັນດາເຜົ່າ ຢູ່ພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ໝັ້ນຄົງ ເຂັ້ມແຂງ, ປະຊາຊົນ ຮັ່ງມີ ຜາສຸກ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

### ມາດຕາ 2 (ປັບປຸງ) ແນວລາວສ້າງຊາດ

ແນວລາວສ້າງຊາດ ແມ່ນ ອົງການຈັດຕັ້ງສຳພັນທາງການເມືອງ ຂອງທົ່ວສັງຄົມ, ເປັນສະຫະພັນຂອງອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນຕົວແທນໃຫ້ແກ່ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຕົວແທນຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ບົນພື້ນຖານຄວາມຕື່ນຕົວ ແລະ ສະໝັກໃຈ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສຳພັນທາງການເມືອງ** ໝາຍເຖິງ ການເຕົ້າໂຮມການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນຕົວແທນ ໃຫ້ແກ່ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຕົວແທນຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ ໃຫ້ເປັນກ້ອນກຳລັງທີ່ມີການຈັດຕັ້ງຢ່າງກວ້າງຂວາງ ເພື່ອປະຕິບັດຈຸດໝາຍລວມຂອງຊາດ;

2. **ພື້ນຖານການເມືອງ** ໝາຍເຖິງ ກຳລັງແຮງຂອງທົ່ວປວງຊົນ ທີ່ໄດ້ເຕົ້າໂຮມ ເຂົ້າໃນການຈັດຕັ້ງຂອງແນວລາວສ້າງຊາດ ເພື່ອປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ປະກອບສ່ວນເຂົ້າໃນການປັບປຸງ ບຸລະນະອຳນາດລັດ ປະຊາທິປະໄຕປະຊາຊົນ;

3. **ອົງການຈັດຕັ້ງການເມືອງ** ໝາຍເຖິງ ພັກປະຊາຊົນປະຕິວັດລາວ;

4. **ອົງການຈັດຕັ້ງການເມືອງ-ສັງຄົມ** ໝາຍເຖິງ ສະຫະພັນກຳມະບານລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ, ສະຫະພັນແມ່ຍິງລາວ ແລະ ສະຫະພັນນັກຮົບເກົ່າລາວ;

5. **ອົງການຈັດຕັ້ງສັງຄົມ** ໝາຍເຖິງ ສະຫະພັນ, ສະມາຄົມ, ມູນນິທິ, ສະໂມສອນ ແລະ ອື່ນໆ;

6. **ຄະນະກຳມະການແນວລາວສ້າງຊາດ** ໝາຍເຖິງ ການຈັດຕັ້ງ ຂອງແນວລາວສ້າງຊາດແຕ່ລະຂັ້ນ ຊຶ່ງປະກອບດ້ວຍ ກຳມະການ, ປະທານ ແລະ ຮອງປະທານ ໂດຍແມ່ນ ກອງປະຊຸມໃຫຍ່, ກອງປະຊຸມສາມັນ ຫຼື ກອງປະຊຸມວິສາມັນ ຂັ້ນນັ້ນ ເປັນຜູ້ຮັບຮອງເອົາ;

7. **ກຳມະການແນວລາວສ້າງຊາດ** ໝາຍເຖິງ ບຸກຄົນທີ່ສັງກັດຢູ່ໃນຄະນະກຳມະການແນວລາວສ້າງຊາດ ຊຶ່ງເປັນຕົວແທນ ໃຫ້ແກ່ບັນດາອົງການຈັດຕັ້ງ, ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງຕົວແທນຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ;

8. **ວຽກງານແນວໂຮມ** ໝາຍເຖິງ ວຽກງານຂອງແນວລາວສ້າງຊາດ;

9. **ການທູດປະຊາຊົນ** ໝາຍເຖິງ ການສ້າງສາຍສຳພັນທີ່ດີ ຂອງປະຊາຊົນ ລະຫວ່າງປະເທດ.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບແນວລາວສ້າງຊາດ

ລັດ ຊຸກຍູ້, ສົ່ງເສີມ ແລະ ເປີດກວ້າງໃນການປະກອບສ່ວນ ທາງດ້ານສະຕິປັນຍາ, ເຫື່ອແຮງ, ຊັບສິນ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ພາຍໃນ ແລະ ຕ່າງປະເທດ ເຂົ້າໃນການເຄື່ອນໄຫວວຽກງານແນວໂຮມ, ປົກປ້ອງການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແນວລາວສ້າງຊາດ ລວມທັງພາຄີ ໃນການປະຕິບັດ ແນວທາງ, ນະໂຍບາຍ, ລັດຖະທຳມະນູນ ແລະ ກົດໝາຍຂອງແນວລາວສ້າງຊາດ ເພື່ອປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກດ້ວຍການປະກອບ ບຸກຄະລາກອນ, ພາຫະນະ, ອຸປະກອນ, ງົບປະມານ ໃຫ້ແກ່ແນວລາວສ້າງຊາດ ເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນໄດ້ເປັນຢ່າງດີ.

### ມາດຕາ 5 (ປັບປຸງ) ຫຼັກການ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແນວລາວສ້າງຊາດ

ແນວລາວສ້າງຊາດ ຈັດຕັ້ງ ແລະ ເຄື່ອນໄຫວ ບົນພື້ນຖານຫຼັກການ ຕົ້ນຕໍ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບຂອງແນວລາວສ້າງຊາດ;

2. ລວມສູນປະຊາທິປະໄຕ, ປຶກສາຫາລື, ປະສານສົມທົບ ແລະ ເປັນເອກະພາບ ໃນການເຄື່ອນໄຫວ;

3. ຕື່ນຕົວ, ສະໝັກໃຈ ແລະ ເປັນແບບຢ່າງ ໃນການເຄື່ອນໄຫວວຽກງານ.

**ມາດຕາ 6 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແນວໂຮມ ດ້ວຍການແລກປ່ຽນບົດຮຽນ, ສ້າງພະນັກງານ, ຍາດແຍ່ງການສະໜັບສະໜູນ ແລະ ຊ່ວຍເຫລືອ ເພື່ອເຮັດໃຫ້ແນວລາວສ້າງຊາດ ມີຄວາມເຂັ້ມແຂງ ໜັກແໜ້ນ ແລະ ປະກອບສ່ວນເພີ່ມທະວີການທູດປະຊາຊົນ, ສ້າງສາຍພົວພັນມິດຕະພາບ ລະຫວ່າງປະຊາຊາດ ໃນການຮ່ວມມື ແລະ ການພັດທະນາ ລວມທັງສະໜັບສະໜູນຂະບວນການຕໍ່ສູ້ເພື່ອສັນຕິພາບ ແລະ ຄວາມກ້າວໜ້າທາງສັງຄົມຢູ່ໃນໂລກ.

## ພາກທີ II
## ແນວລາວສ້າງຊາດ
### ໝວດທີ 1
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ

**ມາດຕາ 7 ທີ່ຕັ້ງ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ເປັນ ພາກສ່ວນໜຶ່ງ ໃນລະບົບການເມືອງ ແຫ່ງ ສປປ ລາວ ໂດຍແມ່ນພັກປະຊາຊົນປະຕິວັດລາວ ເປັນແກນນຳ ແລະ ເປັນພື້ນຖານການເມືອງໜຶ່ງ ຂອງລະບອບປະຊາທິປະໄຕປະຊາຊົນ.

ແນວລາວສ້າງຊາດ ສືບທອດ ແລະ ເສີມຂະຫຍາຍມູນເຊື້ອ ອັນສະຫງ່າລາສີ ຂອງແນວລາວອິດສະລະ ແລະ ແນວລາວຮັກຊາດ ຊຶ່ງໄດ້ເຕົ້າໂຮມຄວາມສາມັກຄີ ປະຊາຊົນລາວບັນດາເຜົ່າ ເຂົ້າໃນການຕໍ່ສູ້ກູ້ຊາດ ໃນເມື່ອກ່ອນ ແລະ ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃນປັດຈຸບັນ.

**ມາດຕາ 8 (ປັບປຸງ) ພາລະບົດບາດ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ມີພາລະບົດບາດ ຕົ້ນຕໍ ດັ່ງນີ້:

1. ເປັນຄັນທຸງ ເຕົ້າໂຮມຄວາມສາມັກຄີປອງດອງ ປະຊາຊົນລາວບັນດາເຜົ່າ, ສ້າງຄວາມເຂັ້ມແຂງ ແລະ ປັບປຸງກຳລັງແຮງທົ່ວປວງຊົນ;

2. ສຶກສາອົບຮົມ, ປຸກລະດົມ ປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;

3. ເສີມຂະຫຍາຍ ສິດເປັນເຈົ້າ ໃນການປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ;

4. ໃກ້ຊິດຕິດແທດ, ເກັບກຳຄຳຄິດຄຳເຫັນ, ສ່ອງແສງມານະຈິດ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວບັນດາເຜົ່າ;

5. ຕິດຕາມ ກວດກາ ການເຄື່ອນໄຫວ ຂອງອົງການອຳນາດລັດ ແລະ ພາຄີຂອງແນວລາວສ້າງຊາດ ໂດຍຜ່ານຄຳເຫັນຂອງປະຊາຊົນລາວບັນດາເຜົ່າ;

6. ເປັນໃຈກາງປະສານສົມທົບ ກັບພາຄີຂອງຕົນ.

**ມາດຕາ 9 (ປັບປຸງ) ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຕົ້າໂຮມຄວາມສາມັກຄີ ປະຊາຊົນລາວບັນດາເຜົ່າ ທັງຢູ່ພາຍໃນ ແລະ ຕ່າງປະເທດ;

2. ຜັນຂະຫຍາຍ ແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ສະເໜີ ສ້າງ ກົດໝາຍ ແລະ ນິຕິກຳອື່ນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ;

4. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າ ຂອງປະຊາຊົນລາວບັນດາເຜົ່າ ໃນການປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

5. ຕິດຕາມ ກວດກາ ການເຄື່ອນໄຫວ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ, ອົງການບໍລິຫານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ພະນັກງານ-ລັດຖະກອນ ຕາມຄຳສະເໜີ ຂອງປະຊາຊົນລາວບັນດາເຜົ່າ, ຊົນຊັ້ນ, ສາສະໜາ, ເພດ, ໄວ ເພື່ອສະເໜີ ຕໍ່ອົງການຈັດຕັ້ງທີ່ກ່ຽວຂ້ອງ ພິຈາລະນາແກ້ໄຂ;

6. ເຂົ້າຮ່ວມການປັບປຸງ, ບູລະນະອຳນາດລັດປະຊາທິປະໄຕປະຊາຊົນ;

7. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ພາຄີ, ປະຊາຊົນລາວບັນດາເຜົ່າ ແລະ ເຂົ້າຮ່ວມການແກ້ໄຂຂໍ້ຂັດແຍ່ງ ຕາມພາລະບົດບາດຂອງຕົນ;

8. ປະກອບສ່ວນ ປົກປັກຮັກສາ, ເສີມຂະຫຍາຍມູນເຊື້ອຮັກຊາດ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ ແລະ ເຜົ່າ;

9. ຖ່າຍທອດຄວາມຮູ້, ບົດຮຽນ, ປະສົບການ ແລະ ມູນເຊື້ອອັນດີງາມ ຂອງແນວລາວອິດສະລະ, ແນວລາວຮັກຊາດ ໃຫ້ແກ່ຄົນຮຸ່ນຫຼັງ;

10. ສະເໜີບຸກຄະລາກອນຂອງຕົນ, ປະກອບຄຳເຫັນຕໍ່ບຸກຄະລາກອນ ຂອງພາກສ່ວນອື່ນ ທີ່ເປັນຕົວແທນ ຂອງປະຊາຊົນລາວບັນດາເຜົ່າ ອອກສະໝັກຮັບເລືອກຕັ້ງ ເຂົ້າໃນອົງການຈັດຕັ້ງການເມືອງ, ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນ ຕາມລະບຽບການ;

11. ປະສານສົມທົບ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການເຄື່ອນໄຫວວຽກງານແນວໂຮມ;

12. ເສີມຂະຫຍາຍ ການທູດປະຊາຊົນ, ສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງປະຊາຊົນລາວບັນດາເຜົ່າ ກັບປະຊາຊົນບັນດາປະເທດໃນພາກພື້ນ ແລະ ສາກົນ;

13. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບແນວລາວສ້າງຊາດ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ລະບົບການຈັດຕັ້ງ, ໂຄງປະກອບກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ຂອງແນວລາວສ້າງຊາດ

**ມາດຕາ 10 (ປັບປຸງ) ລະບົບການຈັດຕັ້ງ ຂອງແນວລາວສ້າງຊາດ**

ລະບົບການຈັດຕັ້ງ ຂອງແນວລາວສ້າງຊາດ ປະກອບດ້ວຍ ສີ່ ຂັ້ນ:

1. ສູນກາງແນວລາວສ້າງຊາດ;
2. ແນວລາວສ້າງຊາດ ແຂວງ, ນະຄອນຫຼວງ;
3. ແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ;
4. ແນວລາວສ້າງຊາດ ບ້ານ.

**ມາດຕາ 11 (ໃໝ່) ໂຄງປະກອບກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດ**

ໂຄງປະກອບກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດ ໄດ້ກຳນົດໄວ້ໃນລະບຽບການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງແນວລາວສ້າງຊາດ ແຕ່ລະຂັ້ນ.

**ມາດຕາ 12 (ປັບປຸງ) ໂຄງປະກອບບຸກຄະລາກອນ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດ ແຕ່ລະຂັ້ນ ມີ ໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ກຳມະການແນວລາວສ້າງຊາດ;
2. ຄະນະປະຈຳຄະນະກຳມະການແນວລາວສ້າງຊາດ;
3. ປະທານຄະນະກຳມະການແນວລາວສ້າງຊາດ;
4. ຮອງປະທານຄະນະກຳມະການແນວລາວສ້າງຊາດປະຈຳການ ແລະ ບໍ່ປະຈຳການ.

**ມາດຕາ 13 (ໃໝ່) ເງື່ອນໄຂ ຂອງກຳມະການແນວລາວສ້າງຊາດ**

ກຳມະການແນວລາວສ້າງຊາດ ມີເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງລາວ ແລະ ຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ;
2. ມີນ້ຳໃຈຮັກຊາດ, ມີບົດບາດ, ໄດ້ຮັບຄວາມເຊື່ອໝັ້ນ ຈາກປະຊາຊົນ ບ່ອນຕົນດຳລົງຊີວິດ ແລະ ອົງການທີ່ກ່ຽວຂ້ອງ;
3. ມີຄວາມຕື່ນຕົວ, ສະໝັກໃຈ, ເປັນແບບຢ່າງທີ່ດີ ໃນການປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ກົດລະບຽບຂອງແນວລາວສ້າງຊາດ;
4. ມີຄວາມສາມາດ ເຕົ້າໂຮມຄວາມສາມັກຄີປອງດອງ ແລະ ສຶກສາອົບຮົມປະຊາຊົນລາວບັນດາເຜົ່າ;
5. ມີການສຶກສາ ຫຼື ວິຊາສະເພາະ ໃນລະດັບໃດໜຶ່ງ;
6. ມີສຸຂະພາບດີ.

**ມາດຕາ 14 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກຳມະການແນວລາວສ້າງຊາດ**

ກຳມະການແນວລາວສ້າງຊາດ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ, ກົດໝາຍ, ມະຕິກອງປະຊຸມໃຫຍ່ ແລະ ກົດລະບຽບ ຂອງແນວລາວສ້າງຊາດ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ແນວທາງ, ນະໂຍບາຍ, ກົດໝາຍ, ມະຕິກອງປະຊຸມໃຫຍ່ ແລະ ກົດລະບຽບ ຂອງແນວລາວສ້າງຊາດ ໃຫ້ທົ່ວສັງຄົມ ເຂົ້າໃຈຢ່າງເລິກເຊິ່ງ ແລະ ປຸກລະດົມປະຊາຊົນລາວບັນດາເຜົ່າ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;

3. ແນະນຳ, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານແນວໂຮມ ຕາມກົດໝາຍ ແລະ ຕາມການມອບໝາຍຂອງປະທານຄະນະກຳມະການແນວລາວສ້າງຊາດ ຂັ້ນຂອງຕົນ;

4. ເຂົ້າຮ່ວມກອງປະຊຸມຕ່າງໆ ຕາມການເຊື້ອເຊີນ;

5. ເຂົ້າຮ່ວມການແກ້ໄຂຂໍ້ຂັດແຍ່ງ ຕາມຄວາມຮັບຜິດຊອບຂອງຕົນ;

6. ພົວພັນ, ຕິດແທດກັບຮາກຖານ, ປະຊາຊົນລາວບັນດາເຜົ່າ ແລະ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານແນວໂຮມ;

7. ໄດ້ຮັບ ຂໍ້ມູນ ຂ່າວສານ ແລະ ນະໂຍບາຍຕ່າງໆ ຕາມລະບຽບການ;

8. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບແນວລາວສ້າງຊາດ ແລະ ຂໍທິດຊີ້ນຳຈາກປະທານຄະນະກຳມະການແນວລາວສ້າງຊາດ ຂັ້ນຂອງຕົນ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 15 (ປັບປຸງ) ສິດ ແລະ ໜ້າທີ່ ຂອງປະທານ ຄະນະກຳມະການແນວລາວສ້າງຊາດ**

ປະທານ ຄະນະກຳມະການແນວລາວສ້າງຊາດ ແຕ່ລະຂັ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ ການສ້າງ ແຜນການ, ແຜນງານ, ໂຄງການລະອຽດ ຂັ້ນຂອງຕົນ ໂດຍສອດຄ່ອງກັບແນວທາງ, ນະໂຍບາຍ, ກົດໝາຍ, ມະຕິກອງປະຊຸມໃຫຍ່ຂອງແນວລາວສ້າງຊາດ ແລະ ແນະນຳການຈັດຕັ້ງປະຕິບັດ;

2. ປຶກສາຫາລື, ປະສານສົມທົບ ວຽກງານກ່ຽວກັບແນວໂຮມ ກັບອົງການຈັດຕັ້ງພັກ, ລັດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນອື່ນ ທີ່ກ່ຽວຂ້ອງ ເປັນຕົ້ນ ການຈັດຕັ້ງ ແລະ ບຸກຄົນ ທີ່ເປັນພາຄີ;

3. ປະກອບຄຳຄິດຄຳເຫັນ, ສະເໜີບັນຫາຕ່າງໆ ກ່ຽວກັບ ແນວທາງ, ນະໂຍບາຍ, ກົດໝາຍ, ມະຕິ ແລະ ຄຳສັ່ງ ທີ່ພົວພັນເຖິງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ ລວມທັງຄົນເຊື້ອຊາດລາວ ທີ່ດຳລົງຊີວິດຢູ່ຕ່າງປະເທດ;

4. ເປັນຜູ້ຕິກລົງ, ຮຽກໂຮມ ທັງເປັນປະທານກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂັ້ນຂອງຕົນ;

5. ຊຸກຍູ້, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານ ຂອງແນວລາວສ້າງຊາດ;

6. ໄດ້ຮັບຂໍ້ມູນ ຂ່າວສານຕ່າງໆ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ;

7. ລາຍງານ ສະພາບວຽກງານແນວໂຮມ ຕໍ່ການຈັດຕັ້ງ ແລະ ພາກສ່ວນທີ່ກ່ຽວຂ້ອງ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 16 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງປະທານ ຄະນະກຳມະການແນວລາວສ້າງຊາດປະຈຳການ ແລະ ບໍ່ປະຈຳການ**

ຮອງປະທານ ຄະນະກຳມະການແນວລາວສ້າງຊາດປະຈຳການ ແຕ່ລະຂັ້ນ ມີ ສິດ ແລະ ໜ້າທີ່ ຈັດຕັ້ງປະຕິບັດວຽກງານລວມ ແລະ ຮັບຜິດຊອບວຽກງານຈຳນວນໜຶ່ງ ຕາມການມອບໝາຍ ຂອງປະທານຄະນະກຳມະການແນວລາວສ້າງຊາດ.

ໃນກໍລະນີ ປະທານຄະນະກຳມະການແນວລາວສ້າງຊາດຕິດຂັດ ແມ່ນ ຮອງປະທານຄະນະກຳມະການແນວລາວສ້າງຊາດປະຈຳການ ຜູ້ຖືກມອບໝາຍຈາກປະທານນັ້ນ ເປັນຜູ້ວ່າການແທນ.

ສຳລັບສິດ ແລະ ໜ້າທີ່ ຂອງຮອງປະທານຄະນະກຳມະການແນວລາວສ້າງຊາດ ບໍ່ປະຈຳການ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 17 (ໃໝ່) ຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດ**

ຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດ ແມ່ນ ການຈັດຕັ້ງທີ່ປະຈຳການ ຂອງແນວລາວສ້າງຊາດ ຊຶ່ງເຮັດບົດບາດປະຕິບັດໜ້າທີ່ແທນ ຄະນະກຳມະການແນວລາວສ້າງຊາດ ໃນໄລຍະທີ່ບໍ່ເປີດກອງປະຊຸມສາມັນປະຈຳປີ.

ຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດ ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ ມີ ປະທານ, ບັນດາຮອງປະທານ ແລະ ກຳມະການຄະນະປະຈຳແນວລາວສ້າງຊາດ.

**ມາດຕາ 18 (ໃໝ່) ສິດ ແລະ ໜ້າທີ່ ຂອງຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດ**

ຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳອື່ນ ທີ່ພົວພັນກັບວຽກງານແນວໂຮມ ເພື່ອສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ພິຈາລະນາຕົກລົງ;
2. ຊີ້ນຳ ການຈັດຕັ້ງເຜີຍແຜ່ ແລະ ເຊື່ອມຊຶມຜົນສຳເລັດຂອງກອງປະຊຸມໃຫຍ່, ກົດລະບຽບ, ແຜນການ, ແຜນງານ, ໂຄງການ, ມະຕິ ແລະ ຄຳສັ່ງຕ່າງໆ ໃຫ້ກວ້າງຂວາງ, ທົ່ວເຖິງ ພ້ອມທັງແນະນຳການຈັດຕັ້ງປະຕິບັດ;
3. ປະສານສົມທົບ ແລະ ປຶກສາຫາລື ວຽກງານກ່ຽວກັບແນວໂຮມ ກັບອົງການຈັດຕັ້ງພັກ, ລັດ, ສະຫະພັນນັກຮົບເກົ່າລາວ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ບຸກຄົນທີ່ເປັນພາຄີຂອງແນວລາວສ້າງຊາດ;
4. ປະກອບຄຳເຫັນ, ສະເໜີບັນຫາຕ່າງໆ ກ່ຽວກັບແນວທາງຂອງພັກ, ນະໂຍບາຍ ແລະ ກົດໝາຍຂອງລັດ ທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ;
5. ຮຽກໂຮມ ແລະ ນຳພາດຳເນີນກອງປະຊຸມໃຫຍ່, ກອງປະຊຸມສາມັນ, ກອງປະຊຸມວິສາມັນ, ກອງປະຊຸມຄະນະປະຈຳ ແລະ ກອງປະຊຸມຮັບການລາຍງານສ່ອງແສງ ຂອງບັນດາອົງການຈັດຕັ້ງພາຄີ ຕາມການມອບໝາຍຂອງປະທານ;
6. ປະສານສົມທົບ ແລະ ປຶກສາຫາລື ກັບຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການຄັດເລືອກເປົ້າໝາຍບຸກຄະລາກອນ ທີ່ຈະອອກສະໝັກຮັບເລືອກຕັ້ງ ເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ;

7. ຊຸກຍູ້, ຕິດຕາມ ກວດກາ ການເຄື່ອນໄຫວ ຂອງແນວລາວສ້າງຊາດຂັ້ນສູນກາງ ແລະ ທ້ອງຖິ່ນ;

8. ຕິດຕາມ ແລະ ສັງລວມ ບັນດາຂໍ້ມູນ ຂ່າວສານ ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງ ລວມທັງຄົນເຊື້ອຊາດລາວ ທີ່ດໍາລົງຊີວິດຢູ່ຕ່າງປະເທດ;

9. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ແລະ ສາກົນ ຕາມການມອບໝາຍ;

10. ຮັບຮອງ ແລະ ຊຸກຍູ້ ແຜນການຕິດຕາມ ກວດກາ ຂອງແນວລາວສ້າງຊາດ ໃນແຕ່ລະໄລຍະຕາມພາລະບົດບາດຂອງຕົນ;

11. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບແນວລາວສ້າງຊາດ ຕໍ່ກອງປະຊຸມສາມັນ ຂອງແນວລາວສ້າງຊາດ ແລະ ຕໍ່ຂັ້ນເທິງ;

12. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ມາດຕາ 19 (ໃໝ່) ການສິ້ນສຸດ ການເປັນກໍາມະການແນວລາວສ້າງຊາດ

ການເປັນກໍາມະການແນວລາວສ້າງຊາດ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ໝົດສະໄໝກອງປະຊຸມໃຫຍ່;
2. ໝົດສິດຈາກການເປັນຕົວແທນ;
3. ຖືກສານຕັດສິນລົງໂທດຕັດອິດສະລະພາບ ໃນສະຖານການກະທໍາຜິດໂດຍເຈດຕະນາ;
4. ຖືກປົດ;
5. ລາອອກ;
6. ເສຍຊີວິດ.

## ພາກທີ III
## ພາຄີ ຂອງແນວລາວສ້າງຊາດ

### ມາດຕາ 20 (ໃໝ່) ພາຄີ ຂອງແນວລາວສ້າງຊາດ

ພາຄີ ຂອງແນວລາວສ້າງຊາດ ແມ່ນ ການຈັດຕັ້ງ ແລະ ບຸກຄົນ ທີ່ເປັນຕົວແທນ ໃຫ້ແກ່ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ຊຶ່ງເຄື່ອນໄຫວຕາມກົດລະບຽບຂອງແນວລາວສ້າງຊາດ. ແຕ່ການຈັດຕັ້ງທີ່ເປັນພາຄີນັ້ນ ຍັງຮັກສາຄວາມເປັນເອກະລາດ ໃນການເຄື່ອນໄຫວວຽກງານ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 21 (ໃໝ່) ການຈັດຕັ້ງ ທີ່ເປັນພາຄີ ຂອງແນວລາວສ້າງຊາດ

ການຈັດຕັ້ງ ທີ່ເປັນພາຄີ ຂອງແນວລາວສ້າງຊາດ ແມ່ນ ອົງການຈັດຕັ້ງການເມືອງ, ອົງການຈັດຕັ້ງການເມືອງ-ສັງຄົມ ແລະ ອົງການຈັດຕັ້ງສັງຄົມຢູ່ ສປປ ລາວ ທີ່ສ້າງຕັ້ງຂຶ້ນຖືກຕ້ອງຕາມກົດໝາຍ.

**ມາດຕາ 22 (ປັບປຸງ) ບຸກຄົນທີ່ເປັນພາຄີ ຂອງແນວລາວສ້າງຊາດ**

ບຸກຄົນທີ່ເປັນພາຄີ ຂອງແນວລາວສ້າງຊາດ ແມ່ນ ບຸກຄົນທີ່ມີເງື່ອນໄຂດຽວກັນກັບກຳມະການແນວລາວສ້າງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍສະບັບນີ້ ແລະ ຕ້ອງໄດ້ຮັບການເຫັນດີຈາກຄະນະກຳມະການແນວລາວສ້າງຊາດທີ່ກ່ຽວຂ້ອງ.

**ມາດຕາ 23 (ໃໝ່) ສິດ ແລະ ໜ້າທີ່ ຂອງພາຄີ ຂອງແນວລາວສ້າງຊາດ**

ພາຄີ ຂອງແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳຂໍ້ມູນ, ຄວາມມຸ່ງມາດປາຖະໜາ, ການສະເໜີ ຂອງປະຊາຊົນລາວບັນດາເຜົ່າ;
2. ເຕົ້າໂຮມຄວາມສາມັກຄີ, ໂຄສະນາ, ປຸກລະດົມປະຊາຊົນລາວບັນດາເຜົ່າ ປະຕິບັດແນວທາງ ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ກົດລະບຽບຂອງແນວລາວສ້າງຊາດ;
3. ປະກອບຄຳເຫັນ ຕໍ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການແນວລາວສ້າງຊາດ, ແນວທາງ, ນະໂຍບາຍ ແລະ ກົດໝາຍ;
4. ປະສານສົມທົບ ກັບຄະນະກຳມະການແນວລາວສ້າງຊາດຂັ້ນທີ່ກ່ຽວຂ້ອງ ໃນການປຸກລະດົມປະຊາຊົນລາວບັນດາເຜົ່າ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດວຽກງານແນວໂຮມ;
5. ສະເໜີຕົວແທນຂອງຕົນ ເພື່ອໃຫ້ກອງປະຊຸມໃຫຍ່ແນວລາວສ້າງຊາດ ຮັບຮອງເອົາເປັນກຳມະການແນວລາວສ້າງຊາດ;
6. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບການເຄື່ອນໄຫວຂອງຄະນະກຳມະການແນວລາວສ້າງຊາດ;
7. ຊຸກຍູ້ ບັນດາການຈັດຕັ້ງຂອງຕົນ ໃຫ້ປະຕິບັດນະໂຍບາຍ ສາມັກຄີປອງດອງທົ່ວປວງຊົນ ແລະ ເຂົ້າຮ່ວມການເຄື່ອນໄຫວວຽກງານແນວໂຮມ ເປັນຕົ້ນ ການສ້າງບ້ານສາມັກຄີ;
8. ເຂົ້າຮ່ວມ ຂົນຂວາຍ ການສ້າງຕັ້ງ ແລະ ພັດທະນາກອງທຶນ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນລາວບັນດາເຜົ່າ ແລະ ບັນຫາອື່ນ;
9. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນຕາມກົດໝາຍ;
10. ປຶກສາຫາລື ກັບພາກສ່ວນທີ່ກ່ຽວຂ້ອງ ໃນການແກ້ໄຂຄຳສະເໜີ ຂອງປະຊາຊົນ;
11. ພົວພັນ ແລະ ຮ່ວມມື ກັບບັນດາອົງການຈັດຕັ້ງ ແລະ ບຸກຄົນ ທີ່ບໍ່ເປັນພາຄີຂອງແນວລາວສ້າງຊາດ ເພື່ອຮ່ວມກັນພັດທະນາ;
12. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານຂອງພາຄີ ໃຫ້ຄະນະກຳມະການແນວລາວສ້າງຊາດ ຢ່າງເປັນປົກກະຕິ;
13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ IV
## ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ

**ມາດຕາ 24 (ໃໝ່) ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ**

ຄະນະກຳມະການແນວລາວສ້າງຊາດທຸກຂັ້ນ ມີໜ້າທີ່ ຊຸກຍູ້, ປຸກລະດົມ ການຈັດຕັ້ງ, ບຸກຄົນ, ຜູ້ຊົງຄຸນວຸດທິ ທີ່ມີບົດບາດ ແລະ ໄດ້ຮັບຄວາມເຊື່ອຖື ໃຫ້ມີການເຄື່ອນໄຫວ ຫຼາຍຮູບ ຫຼາຍສີ ໃນການເຕົ້າໂຮມ

ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ ໂດຍບໍ່ຈໍາແນກ ຊັ້ນຄົນ, ຊົນເຜົ່າ, ສາສະໜາ, ເພດ, ໄວ ລວມທັງ ຄົນເຊື້ອຊາດລາວ ທີ່ດໍາລົງຊີວິດຢູ່ຕ່າງປະເທດ ເປັນກໍາລັງແຮງເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາ ປະເທດຊາດ.

**ມາດຕາ 25 (ໃໝ່) ວິທີການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ**

ການເຕົ້າໂຮມ ແລະ ສ້າງຄວາມສາມັກຄີປອງດອງທົ່ວປວງຊົນ ໃຫ້ປະຕິບັດດ້ວຍວິທີການ ດັ່ງນີ້:

1. ໂຄສະນາ, ສຶກສາອົບຮົມ, ປຸກລະດົມ ປະຊາຊົນລາວບັນດາເຜົ່າ ເສີມຂະຫຍາຍມູນເຊື້ອຮັກຊາດ, ສາມັກຄີປອງດອງທົ່ວປວງຊົນ ປະກອບສ່ວນເຂົ້າໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ;

2. ເປັນແບບຢ່າງທີ່ດີ, ເປັນຜູ້ນໍາໜ້າ ໃນການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ກົດລະບຽບຂອງແນວລາວສ້າງຊາດ;

3. ເຄື່ອນໄຫວ ຫຼາຍຮູບ ຫຼາຍສີ ພ້ອມທັງຊຸກຍູ້ຂະບວນການ ສ້າງບ້ານສາມັກຄີ ໂດຍສອດຄ່ອງກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ ໃນແຕ່ລະໄລຍະ;

4. ພົວພັນຮ່ວມມື ກັບການຈັດຕັ້ງຂອງພັກ ແລະ ລັດ ເພື່ອສ້າງກ້ອນກໍາລັງສາມັກຄີປອງດອງທົ່ວປວງຊົນ ເຂົ້າຮ່ວມການຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ;

5. ຊຸກຍູ້ ຄົນເຊື້ອຊາດລາວ ທີ່ດໍາລົງຊີວິດຢູ່ຕ່າງປະເທດ ໃຫ້ສາມັກຄີຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ເຄົາລົບ ແລະ ປະຕິບັດກົດໝາຍ ຂອງປະເທດທີ່ຕົນອາໄສຢູ່, ປະກອບສ່ວນສະຕິປັນຍາ ແລະ ທຶນຮອນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕົນ.

## ພາກທີ V
## ການຕິດຕາມກວດກາ ຂອງແນວລາວສ້າງຊາດ

**ມາດຕາ 26 (ໃໝ່) ການຕິດຕາມກວດກາ ຂອງແນວລາວສ້າງຊາດ**

ການຕິດຕາມກວດກາ ຂອງແນວລາວສ້າງຊາດ ແມ່ນ ການຕິດຕາມກວດກາ ໂດຍຜ່ານຄໍາຄິດຄໍາເຫັນ, ຄໍາສະເໜີ, ການສ່ອງແສງ ເຖິງຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວບັນດາເຜົ່າ ກ່ຽວກັບການຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

**ມາດຕາ 27 (ໃໝ່) ເປົ້າໝາຍ ການຕິດຕາມກວດກາ ຂອງແນວລາວສ້າງຊາດ**

ເປົ້າໝາຍ ການຕິດຕາມກວດກາ ຂອງແນວລາວສ້າງຊາດ ມີ ດັ່ງນີ້:

1. ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ;
2. ອົງການລັດບໍລິຫານ;
3. ອົງການຕຸລາການ ແລະ ອົງການໄອຍະການປະຊາຊົນ;

4. ພະນັກງານ-ລັດຖະກອນ;
5. ພາຄີ ຂອງແນວລາວສ້າງຊາດ.

**ມາດຕາ 28 (ໃໝ່) ເນື້ອໃນການຕິດຕາມກວດກາ ຂອງແນວລາວສ້າງຊາດ**

ເນື້ອໃນການຕິດຕາມກວດກາ ຂອງແນວລາວສ້າງຊາດ ມີ ດັ່ງນີ້:

1. ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ແລະ ສະມາຊິກຂອງສະພາດັ່ງກ່າວ;
2. ການປະຕິບັດກົດໝາຍ ຂອງອົງການລັດບໍລິຫານ ທີ່ພົວພັນເຖິງສິດ ແລະ ພັນທະພື້ນຖານຂອງພົນລະເມືອງ;
3. ການປະຕິບັດໜ້າທີ່ ຂອງອົງການຕຸລາການ ແລະ ອົງການໄອຍະການປະຊາຊົນ;
4. ການນໍາໃຊ້ສິດ, ການປະຕິບັດ ພັນທະ ແລະ ໜ້າທີ່ ຂອງພະນັກງານ-ລັດຖະກອນ;
5. ການເຄື່ອນໄຫວອງການ ຂອງພາຄີແນວລາວສ້າງຊາດ;
6. ຄໍາຮ້ອງທຸກ, ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວບັນດາເຜົ່າ;
7. ການແກ້ໄຂຂໍ້ຂັດແຍ່ງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ.

## ພາກທີ VI
## ກອງປະຊຸມ ຂອງແນວລາວສ້າງຊາດ

**ມາດຕາ 29 (ປັບປຸງ) ປະເພດກອງປະຊຸມ**

ກອງປະຊຸມ ຂອງແນວລາວສ້າງຊາດ ມີ ສີ່ ປະເພດ ດັ່ງນີ້:

1. ກອງປະຊຸມໃຫຍ່;
2. ກອງປະຊຸມສາມັນ;
3. ກອງປະຊຸມວິສາມັນ;
4. ກອງປະຊຸມຄະນະປະຈໍາ.

**ມາດຕາ 30 (ປັບປຸງ) ກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ ຜູ້ແທນແນວລາວສ້າງຊາດ ທົ່ວປະເທດ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ແລະ ບ້ານ ແມ່ນກອງປະຊຸມສູງສຸດ ຂອງແນວລາວສ້າງຊາດແຕ່ລະຂັ້ນ ຊຶ່ງ ຫ້າປີ ໃດເປີດຂຶ້ນ ເທື່ອໜຶ່ງ. ກ່ອນຈະເປີດກອງປະຊຸມໃຫຍ່ ປະທານຄະນະກໍາມະການແນວລາວສ້າງຊາດ ຕ້ອງໄດ້ແຈ້ງໄປຍັງ ຄະນະກໍາມະການແນວລາວສ້າງຊາດຂັ້ນຂອງຕົນ ແລະ ຄະນະກໍາມະການແນວລາວສ້າງຊາດຂັ້ນລຸ່ມ ກ່ອນໜຶ່ງ ປີ.

**ມາດຕາ 31 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຊຸມໃຫຍ່**

ກອງປະຊຸມໃຫຍ່ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ຄົ້ນຄວ້າ ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການເມືອງ;

2. ພິຈາລະນາ ແລະ ຮັບຮອງເອົາການປັບປຸງກົດລະບຽບຂອງແນວລາວສ້າງຊາດ;

3. ພິຈາລະນາ ແລະ ຮັບຮອງເອົາ ຄະນະກຳມະການ, ຄະນະປະຈຳ, ປະທານ, ຮອງປະທານ ແນວລາວສ້າງຊາດ;

4. ພິຈາລະນາ ແລະ ຮັບຮອງເອົາ ປະທານ, ຮອງປະທານກວດກາ ຂອງຄະນະກຳມະການແນວລາວສ້າງຊາດ ຕາມການສະເໜີຂອງປະທານແນວລາວສ້າງຊາດແຕ່ລະຂັ້ນ;

5. ພິຈາລະນາ ບັນຫາສຳຄັນຕ່າງໆ;

6. ຮັບຮອງເອົາມະຕິກອງປະຊຸມໃຫຍ່ ແນວລາວສ້າງຊາດ.

**ມາດຕາ 32 (ປັບປຸງ) ກອງປະຊຸມສາມັນ**

ກອງປະຊຸມສາມັນ ແມ່ນ ກອງປະຊຸມຄົບຄະນະກຳມະການແນວລາວສ້າງຊາດ ປະຈຳປີ ໂດຍແມ່ນ ປະທານຄະນະກຳມະການແນວລາວສ້າງຊາດຂັ້ນນັ້ນ ເປັນຜູ້ຮຽກໂຮມ ແລະ ເປັນປະທານກອງປະຊຸມ.

ກອງປະຊຸມສາມັນ ຕ້ອງມີກຳມະການແນວລາວສ້າງຊາດ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມຂອງຈຳນວນກຳມະການທັງໝົດ; ປະທານຄະນະກຳມະການແນວລາວສ້າງຊາດ ຕ້ອງແຈ້ງໄປຍັງກຳມະການແນວລາວສ້າງຊາດຂັ້ນຂອງຕົນ ແລະ ຄະນະກຳມະການແນວລາວສ້າງຊາດຂັ້ນລຸ່ມກ່ອນ ສາມເດືອນ.

**ມາດຕາ 33 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກອງປະຊຸມສາມັນ**

ກອງປະຊຸມສາມັນ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບ ການເຄື່ອນໄຫວວຽກງານ ໜຶ່ງປີ ຜ່ານມາ, ທິດທາງໜ້າທີ່ວຽກງານໃນຕໍ່ໜ້າ ຂອງຄະນະກຳມະການແນວລາວສ້າງຊາດຂັ້ນຂອງຕົນ;

2. ພິຈາລະນາ ແລະ ຕົກລົງບັນຫາສຳຄັນຕ່າງໆ;

3. ພິຈາລະນາ ແລະ ຮັບຮອງເອົາການສະເໜີເພີ່ມກຳມະການແນວລາວສ້າງຊາດຂັ້ນຂອງຕົນຕາມລະບຽບການ;

4. ພິຈາລະນາ ແລະ ຮັບຮອງເອົາການຈັດຕັ້ງ ຫຼື ບຸກຄົນ ເຂົ້າເປັນພາຄີ ຂອງແນວລາວສ້າງຊາດ ໃນຂັ້ນຂອງຕົນ;

5. ຮັບຮອງເອົາມະຕິກອງປະຊຸມແນວລາວສ້າງຊາດ ຂັ້ນຂອງຕົນ.

**ມາດຕາ 34 (ປັບປຸງ) ກອງປະຊຸມວິສາມັນ**

ກອງປະຊຸມວິສາມັນ ຈະເປີດຂຶ້ນເວລາໃດກໍໄດ້ ໃນກໍລະນີຈຳເປັນ ແລະ ຮີບດ່ວນ ເພື່ອພິຈາລະນາບັນຫາສຳຄັນ ຕາມການສະເໜີຂອງປະທານຄະນະກຳມະການແນວລາວສ້າງຊາດ.

ກອງປະຊຸມວິສາມັນ ຈະເປີດຂຶ້ນໄດ້ ກໍຕໍ່ເມື່ອມີກຳມະການແນວລາວສ້າງຊາດ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນກຳມະການທັງໝົດ.

**ມາດຕາ 35 (ໃໝ່) ກອງປະຊຸມຄະນະປະຈຳ**

ກອງປະຊຸມຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດແຕ່ລະຂັ້ນ ເປີດຂຶ້ນຢ່າງໜ້ອຍເດືອນລະເທື່ອ ເພື່ອພິຈາລະນາ ບັນຫາສຳຄັນ, ມີຈຸດສຸມຕິດພັນກັບມະຕິ, ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ.

ກອງປະຊຸມຄະນະປະຈຳ ຄະນະກຳມະການແນວລາວສ້າງຊາດເປີດກວ້າງ ເປີດຂຶ້ນປີລະເທື່ອ ກ່ອນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ກອງປະຊຸມສະໄໝສາມັນຂອງສະພາປະຊາຊົນຂັ້ນແຂວງ.

ສາມເດືອນໃດ ຄະນະປະຈຳຄະນະກຳມະການແນວລາວສ້າງຊາດ ຮັບການສ່ອງແສງຈາກບັນດາພາຄີ, ກຳມະການແນວລາວສ້າງຊາດ ອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.

**ມາດຕາ 36 (ປັບປຸງ) ມະຕິກອງປະຊຸມ**

ກອງປະຊຸມໃຫຍ່, ກອງປະຊຸມສາມັນ, ກອງປະຊຸມວິສາມັນ ແລະ ກອງປະຊຸມຄະນະປະຈຳ ຕ້ອງມີມະຕິຮັບຮອງບັນຫາສຳຄັນ ທີ່ໄດ້ນຳມາພິຈາລະນາ.

ມະຕິກອງປະຊຸມ ຈະມີຄຸນຄ່າໃຊ້ໄດ້ ກໍຕໍ່ເມື່ອມີຜູ້ແທນ ແລະ ກຳມະການແນວລາວສ້າງຊາດ ທີ່ເຂົ້າຮ່ວມປະຊຸມຮັບຮອງເອົາ ເປັນຈຳນວນສຽງສ່ວນຫຼາຍ.

## ພາກທີ VII
## ງົບປະມານ ຂອງແນວລາວສ້າງຊາດ

**ມາດຕາ 37 (ປັບປຸງ) ແຫຼ່ງລາຍຮັບ**

ແຫຼ່ງລາຍຮັບ ຂອງແນວລາວສ້າງຊາດ ແຕ່ລະຂັ້ນ ມີ ດັ່ງນີ້ :

1. ລາຍຮັບ ຈາກງົບປະມານແຫ່ງລັດ;
2. ລາຍຮັບ ຈາກການເຄື່ອນໄຫວຫາລາຍໄດ້ທີ່ຖືກຕ້ອງຕາມກົດໝາຍ;
3. ລາຍຮັບ ຈາກການຊ່ວຍເຫຼືອ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ;
4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 38 (ປັບປຸງ) ການຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ**

ແນວລາວສ້າງຊາດແຕ່ລະຂັ້ນ ຄຸ້ມຄອງລາຍຮັບ ແລະ ລາຍຈ່າຍຂອງຕົນ ຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

## ພາກທີ VIII
## ຂໍ້ຫ້າມ

**ມາດຕາ 39 (ປັບປຸງ) ຂໍ້ຫ້າມ ສຳລັບຄະນະກຳມະການແນວລາວສ້າງຊາດ**

ຫ້າມຄະນະກຳມະການແນວລາວສ້າງຊາດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ;
2. ຈັດຕັ້ງເປັນກຸ່ມກ້ອນ, ແບ່ງແຍກຄວາມສາມັກຄີປະຊາຊົນລາວບັນດາເຜົ່າ, ຄວາມສາມັກຄີພາຍໃນຄະນະກຳມະການແນວລາວສ້າງຊາດ;

3. ກໍ່ຄວາມເສຍຫາຍຕໍ່ຜົນປະໂຫຍດ ຂອງບຸກຄົນ, ລວມໝູ່ ຫຼື ການຈັດຕັ້ງ;

4. ເມີນເສີຍຕໍ່ການປະຕິບັດໜ້າທີ່;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 40 (ປັບປຸງ) ຂໍ້ຫ້າມ ສໍາລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ແຕ່ງຕັ້ງ, ຍົກຍ້າຍ ປະທານ, ຮອງປະທານ ຫຼື ກຳມະການແນວລາວສ້າງຊາດແຕ່ລະຂັ້ນ ໂດຍບໍ່ໄດ້ປະສານສົມທົບກັບ ແນວລາວສ້າງຊາດຂັ້ນຂອງຕົນ ແລະ ຂັ້ນເທິງ;

2. ຂັດຂວາງ, ນາບຂູ່, ໃຊ້ຄວາມຮຸນແຮງ ຕໍ່ຄະນະກຳມະການ ຫຼື ພະນັກງານ-ລັດຖະກອນແນວລາວສ້າງຊາດ ທີ່ເຄື່ອນໄຫວຢ່າງຖືກຕ້ອງຕາມກົດໝາຍ;

3. ລະເມີດສິດ, ຜົນປະໂຫຍດ, ຍົກຍອກ, ສໍ້ໂກງເອົາຊັບສິນ ຂອງແນວລາວສ້າງຊາດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ IX
## ການຄຸ້ມຄອງ ແລະ ການກວດກາ
### ໝວດທີ 1
### ການຄຸ້ມຄອງວຽກງານແນວລາວສ້າງຊາດ

**ມາດຕາ 41 (ປັບປຸງ) ອົງການຄຸ້ມຄອງວຽກງານແນວລາວສ້າງຊາດ**

ອົງການຄຸ້ມຄອງວຽກງານແນວລາວສ້າງຊາດ ປະກອບດ້ວຍ:

1. ສູນກາງແນວລາວສ້າງຊາດ;
2. ແນວລາວສ້າງຊາດ ແຂວງ, ນະຄອນຫຼວງ;
3. ແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ;
4. ແນວລາວສ້າງຊາດ ບ້ານ.

**ມາດຕາ 42 (ປັບປຸງ) ສິດ ແລະ ໜ້າທີ່ ຂອງສູນກາງແນວລາວສ້າງຊາດ**

ໃນການຄຸ້ມຄອງວຽກງານແນວລາວສ້າງຊາດ, ສູນກາງແນວລາວສ້າງຊາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານແນວໂຮມ ເພື່ອສະເໜີອົງການທີ່ກ່ຽວຂ້ອງພິຈາລະນາ;

2. ຫັນຂະຫຍາຍ ແນວທາງ, ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ມະຕິກອງປະຊຸມໃຫຍ່ຂອງຕົນ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ກົດໝາຍ, ກົດລະບຽບຂອງແນວລາວສ້າງຊາດ;

4. ຕິດຕາມ, ແນະນຳ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານແນວໂຮມ, ກົດໝາຍ ແລະ ລະບຽບການກ່ຽວກັບແນວລາວສ້າງຊາດ;

5. ປຸກລະດົມ, ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ ປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອຮັກຊາດ, ເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ເຂົ້າຮ່ວມໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ;

6. ພິຈາລະນາ ລົບລ້າງ ຫຼື ໂຈະ ການປະຕິບັດ ມະຕິ, ຄຳແນະນຳ, ແຈ້ງການ ແລະ ລະບຽບການ ຂອງຄະນະກຳມະການແນວລາວສ້າງຊາດຂັ້ນລຸ່ມ ຫຼື ສະເໜີໃຫ້ພາກສ່ວນອື່ນທີ່ກ່ຽວຂ້ອງ ລົບລ້າງ ຫຼື ໂຈະ ການປະຕິບັດນິຕິກຳດັ່ງກ່າວ ທີ່ເຫັນວ່າບໍ່ສອດຄ່ອງກັບ ກົດໝາຍ, ກົດລະບຽບ ຫຼື ມະຕິກອງປະຊຸມຂັ້ນຂອງຕົນ;

7. ພິຈາລະນາ ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານ-ລັດຖະກອນ ແນວລາວສ້າງຊາດຂັ້ນຂອງຕົນ, ການສ້າງຕັ້ງ, ປັບປຸງ, ຍຸບເລີກກົງຈັກຊ່ວຍວຽກ; ແນະນຳການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກກົງຈັກການຈັດຕັ້ງ ຂອງແນວລາວສ້າງຊາດຂັ້ນລຸ່ມ;

8. ລະດົມແຫຼ່ງລາຍຮັບ ດ້ວຍຮູບການຕ່າງໆທີ່ຖືກຕ້ອງຕາມກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;

9. ພົວພັນ, ປະສານສົມທົບ ແລະ ຮ່ວມມື ກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ, ຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມລະບຽບການ;

10. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານແນວໂຮມ ຕໍ່ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43 (ປັບປຸງ) ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານແນວລາວສ້າງຊາດ, ແນວລາວສ້າງຊາດ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການ, ກົດລະບຽບ ຂອງແນວລາວສ້າງຊາດ, ມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂອງສູນກາງແນວລາວສ້າງຊາດ ແລະ ຂັ້ນຂອງຕົນ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ກົດລະບຽບ ຂອງແນວລາວສ້າງຊາດ;

3. ຕິດຕາມ, ຊຸກຍູ້, ແນະນຳ ການຈັດຕັ້ງປະຕິບັດ ວຽກງານແນວໂຮມ, ກົດໝາຍ, ລະບຽບການ ແລະ ກົດລະບຽບ ຂອງແນວລາວສ້າງຊາດ;

4. ປຸກລະດົມ, ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ ປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອຮັກຊາດ, ເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ແລະ ເຂົ້າຮ່ວມໃນການປົກປັກຮັກສາ, ສ້າງສາພັດທະນາປະເທດຊາດ ແລະ ທ້ອງຖິ່ນຂອງຕົນ;

5. ພິຈາລະນາ ລຶບລ້າງ ຫຼື ໂຈະ ການປະຕິບັດ ມະຕິ, ຄຳແນະນຳ, ແຈ້ງການ ແລະ ລະບຽບການຂອງຄະນະກຳມະການແນວລາວສ້າງຊາດຂັ້ນລຸ່ມ ຫຼື ສະເໜີໃຫ້ພາກສ່ວນອື່ນທີ່ກ່ຽວຂ້ອງ ລຶບລ້າງ ຫຼື ໂຈະການປະຕິບັດນິຕິກຳດັ່ງກ່າວ ທີ່ເຫັນວ່າບໍ່ສອດຄ່ອງກັບ ກົດໝາຍ, ກົດລະບຽບ ຫຼື ມະຕິກອງປະຊຸມຂັ້ນຂອງຕົນ;

6. ພິຈາລະນາການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານ-ລັດຖະກອນ ແນວລາວສ້າງຊາດຂັ້ນຂອງຕົນ;

7. ພິຈາລະນາ ການສ້າງຕັ້ງ, ປັບປຸງ, ຍຸບເລີກ ກົງຈັກຊ່ວຍວຽກ; ແນະນຳການສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ກົງຈັກການຈັດຕັ້ງຂອງແນວລາວສ້າງຊາດຂັ້ນລຸ່ມ;

8. ລະດົມແຫຼ່ງລາຍຮັບ ດ້ວຍຮູບການຕ່າງໆທີ່ຖືກຕ້ອງຕາມກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ແລະ ອົງການພາຄີ;

9. ພົວພັນ, ປະສານສົມທົບ ແລະ ຮ່ວມມື ກັບອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີ ຫຼື ການມອບໝາຍ ຈາກອົງການທີ່ກ່ຽວຂ້ອງ;

10. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານແນວໂຮມ ຕໍ່ສູນກາງແນວລາວສ້າງຊາດ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 (ປັບປຸງ) ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານແນວລາວສ້າງຊາດ, ແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການ, ກົດລະບຽບ, ມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂອງຂັ້ນເທິງ ແລະ ຂັ້ນຂອງຕົນ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ກົດໝາຍ, ກົດລະບຽບຂອງແນວລາວສ້າງຊາດ;

3. ຕິດຕາມ, ແນະນຳ ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານແນວໂຮມ, ກົດໝາຍ, ລະບຽບການ ແລະ ກົດລະບຽບຂອງແນວລາວສ້າງຊາດ;

4. ປຸກລະດົມ, ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ ປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອຮັກຊາດ, ເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ເຂົ້າຮ່ວມໃນການປົກປັກຮັກສາ, ສ້າງສາພັດທະນາປະເທດຊາດ ແລະ ທ້ອງຖິ່ນຂອງຕົນ;

5. ພິຈາລະນາ ລຶບລ້າງ ຫຼື ໂຈະ ການປະຕິບັດ ມະຕິ, ຄຳແນະນຳ, ແຈ້ງການ ແລະ ລະບຽບການ ຂອງຄະນະກຳມະການແນວລາວສ້າງຊາດບ້ານ ຫຼື ສະເໜີໃຫ້ພາກສ່ວນອື່ນທີ່ກ່ຽວຂ້ອງ ລຶບລ້າງ ຫຼື ໂຈະການປະຕິບັດນິຕິກຳດັ່ງກ່າວ ທີ່ເຫັນວ່າບໍ່ສອດຄ່ອງກັບ ແນວທາງ, ກົດໝາຍ, ກົດລະບຽບ ຫຼື ມະຕິກອງປະຊຸມຂັ້ນຂອງຕົນ;

6. ລະດົມແຫຼ່ງລາຍຮັບ ດ້ວຍຮູບການຕ່າງໆທີ່ຖືກຕ້ອງຕາມກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ແລະ ອົງການພາຄີ;

7. ພິຈາລະນາແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານ-ລັດຖະກອນ ແນວລາວສ້າງຊາດຂັ້ນຂອງຕົນ;

8. ສະເໜີການຈັດຕັ້ງທີ່ກ່ຽວຂ້ອງພິຈາລະນາສ້າງຕັ້ງ, ປັບປຸງ, ຍຸບເລີກກົງຈັກຊ່ວຍວຽກຂັ້ນຂອງຕົນ;

9. ພົວພັນ, ປະສານສົມທົບ ແລະ ຮ່ວມມື ກັບອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ຕາມການຕົກລົງເຫັນດີ ຫຼື ການມອບໝາຍ ຂອງອົງການທີ່ກ່ຽວຂ້ອງ;

10. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານແນວໂຮມ ຕໍ່ແນວລາວສ້າງຊາດ ແຂວງ, ນະຄອນຫຼວງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ມາດຕາ 45 (ປັບປຸງ) ສິດ ແລະ ໜ້າທີ່ ຂອງແນວລາວສ້າງຊາດບ້ານ

ໃນການຄຸ້ມຄອງວຽກງານແນວລາວສ້າງຊາດ, ແນວລາວສ້າງຊາດບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການ, ກົດລະບຽບ, ມະຕິກອງປະຊຸມໃຫຍ່, ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ ຂອງຂັ້ນເທິງ ແລະ ຂັ້ນຂອງຕົນ;

2. ໂຄສະນາ, ເຜີຍແຜ່ ແລະ ສຶກສາອົບຮົມ ແນວທາງ, ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ກົດລະບຽບຂອງແນວລາວສ້າງຊາດ;

3. ປຸກລະດົມ, ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ ປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ມີຄວາມຕື່ນຕົວທາງດ້ານການເມືອງ, ເປັນພົນລະເມືອງດີ, ເສີມຂະຫຍາຍມູນເຊື້ອຮັກຊາດ, ເຄົາລົບ, ປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ເຂົ້າຮ່ວມໃນການປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ, ສິ່ງແວດລ້ອມ, ການສ້າງສາພັດທະນາປະເທດຊາດ ແລະ ບ້ານຂອງຕົນ;

4. ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ ພາຍໃນປະຊາຊົນ;

5. ຕິດຕາມ, ຊຸກຍູ້ ການເຄື່ອນໄຫວວຽກງານແນວໂຮມ ຂອງແນວລາວສ້າງຊາດ ແລະ ການສ້າງບ້ານສາມັກຄີປອງດອງ, ບ້ານພັດທະນາ;

6. ລະດົມແຫຼ່ງລາຍຮັບ ດ້ວຍຮູບການຕ່າງໆທີ່ຖືກຕ້ອງຕາມກົດໝາຍ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ແລະ ອົງການພາຄີ;

7. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານແນວໂຮມ ຕໍ່ແນວລາວສ້າງຊາດ ເມືອງ, ເທດສະບານ, ນະຄອນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຂອງບ້ານ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

# ໝວດທີ 2
# ການກວດກາວຽກງານ ຂອງແນວລາວສ້າງຊາດ

## ມາດຕາ 46 (ປັບປຸງ) ອົງການກວດກາວຽກງານ ຂອງແນວລາວສ້າງຊາດ

ອົງການກວດກາວຽກງານ ຂອງແນວລາວສ້າງຊາດ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານ ຂອງແນວລາວສ້າງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ແລະ ປະຊາຊົນ.

### ມາດຕາ 47 (ປັບປຸງ) ເນື້ອໃນການກວດກາ

ການກວດກາວຽກງານຂອງແນວລາວສ້າງຊາດ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ, ກົດລະບຽບ, ແຜນພັດທະນາ ວຽກງານແນວໂຮມ ແລະ ມະຕິກອງປະຊຸມໃຫຍ່ ແນວລາວສ້າງຊາດຂັ້ນຂອງຕົນ ແລະ ຂັ້ນລຸ່ມ;

2. ການຄຸ້ມຄອງ, ນຳໃຊ້ ແລະ ປະຕິບັດນະໂຍບາຍ ຕໍ່ຄະນະກຳມະການແນວລາວສ້າງຊາດ, ພະນັກງານ-ລັດຖະກອນ ຂອງແນວລາວສ້າງຊາດ;

3. ການຄຸ້ມຄອງ, ນຳໃຊ້ງົບປະມານ, ວັດຖຸ ແລະ ຊັບສິນ ຂອງແນວລາວສ້າງຊາດ;

4. ການປົກປ້ອງສິດ ແລະ ຜົນປະໂຫຍດ ຂອງກຳມະການແນວລາວສ້າງຊາດ, ພາຄີ, ພະນັກງານ-ລັດຖະກອນ ຂອງແນວລາວສ້າງຊາດ;

5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

### ມາດຕາ 48 (ປັບປຸງ) ຮູບການການກວດກາ

ຮູບການ ການກວດກາມີ ດັ່ງນີ້:

1. ການກວດກາ ປົກກະຕິຕາມແຜນການ;
2. ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາ ປົກກະຕິຕາມແຜນການ ແມ່ນ ການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາ ໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາ ນອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ.

ການກວດກາ ແບບກະທັນຫັນ ແມ່ນ ການກວດກາ ທີ່ຮີບດ່ວນໂດຍບໍ່ໄດ້ແຈ້ງລ່ວງໜ້າ ໃຫ້ເປົ້າໝາຍຖືກກວດກາ.

## ພາກທີ X
## ລະບອບ, ແບບແຜນ ວິທີເຮັດວຽກ

### ມາດຕາ 49 (ປັບປຸງ) ລະບອບວິທີເຮັດວຽກ

ແນວລາວສ້າງຊາດ ປະຕິບັດລະບອບວິທີເຮັດວຽກ ຕາມຫຼັກການ ຕື່ນຕົວ, ສະໝັກໃຈ, ປຶກສາຫາລື ຢ່າງມີປະຊາທິປະໄຕ ແລະ ເປັນເອກະພາບໃນການກະທຳ ສົມທົບຫຼັກການລວມສູນປະຊາທິປະໄຕກັບຫຼັກການປຶກສາຫາລື ເພື່ອຄວາມເປັນເອກະພາບ.

ແນວລາວສ້າງຊາດ ຖືເອົາກອງປະຊຸມ ເປັນບ່ອນປຶກສາຫາລື ແລະ ເປັນເອກະພາບ ໃນການຕົກລົງບັນຫາສຳຄັນຕ່າງໆ.

ໃນການປະສານສົມທົບກັບພາຄີນັ້ນ ແນວລາວສ້າງຊາດ ເຄົາລົບຄວາມເປັນເອກະລາດ ໃນການເຄື່ອນໄຫວວຽກງານຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 50 (ປັບປຸງ) ແບບແຜນວິທີເຮັດວຽກ**

ແນວລາວສ້າງຊາດ ເຮັດວຽກຢ່າງມີແຜນການ, ແບ່ງງານ, ແບ່ງຄວາມຮັບຜິດຊອບ, ມີການກວດກາ, ສະຫຼຸບ, ຖອດຖອນບົດຮຽນ, ປະຕິບັດລະບອບລາຍງານ, ປະສານສົມທົບກັບການຈັດຕັ້ງຕ່າງໆ ແລະ ອົງການທີ່ກ່ຽວຂ້ອງ; ພົວພັນ, ຮ່ວມມື ກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມລະບຽບການ.

**ມາດຕາ 51 (ໃໝ່) ການພົວພັນລະຫວ່າງ ສູນກາງແນວລາວສ້າງຊາດ ກັບ ສະພາແຫ່ງຊາດ**

ການພົວພັນລະຫວ່າງ ສູນກາງແນວລາວສ້າງຊາດ ກັບ ສະພາແຫ່ງຊາດ ແມ່ນ ເພື່ອກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ, ການຕິດຕາມກວດກາການເຄື່ອນໄຫວ ຂອງສະມາຊິກສະພາແຫ່ງຊາດ, ປະກອບຄຳເຫັນ ຕໍ່ການສ້າງ ແລະ ປັບປຸງກົດໝາຍ ທີ່ກ່ຽວຂ້ອງ.

**ມາດຕາ 52 (ໃໝ່) ການພົວພັນລະຫວ່າງ ສູນກາງແນວລາວສ້າງຊາດ ກັບ ລັດຖະບານ**

ການພົວພັນ ລະຫວ່າງ ສູນກາງແນວລາວສ້າງຊາດ ກັບ ລັດຖະບານ ມີ ດັ່ງນີ້:

1. ປຶກສາຫາລື, ແລກປ່ຽນຄຳເຫັນ ໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ;
2. ຮັບເອົາທິດທາງວຽກງານ, ມະຕິຂອງກອງປະຊຸມລັດຖະບານ;
3. ສະເໜີ ຄຳຄິດຄຳເຫັນ, ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນລາວບັນດາເຜົ່າ ຕໍ່ລັດຖະບານ;
4. ເຊີນຜູ້ຕາງໜ້າລັດຖະບານ ເຂົ້າຮ່ວມກອງປະຊຸມ ສູນກາງແນວລາວສ້າງຊາດ.

**ມາດຕາ 53 (ໃໝ່) ການພົວພັນລະຫວ່າງ ແນວລາວສ້າງຊາດແຂວງ, ນະຄອນຫຼວງ ກັບ ສະພາປະຊາຊົນຂັ້ນແຂວງ**

ການພົວພັນລະຫວ່າງແນວລາວສ້າງຊາດ ແຂວງ, ນະຄອນຫຼວງ ກັບ ສະພາປະຊາຊົນຂັ້ນແຂວງ ແມ່ນ ເພື່ອສ້າງ ແລະ ປັບປຸງນິຕິກຳທີ່ສຳຄັນຂັ້ນແຂວງ, ກະກຽມໃຫ້ແກ່ການເລືອກຕັ້ງສະມາຊິກສະພາປະຊາຊົນຂັ້ນແຂວງ, ຕິດຕາມກວດກາການເຄື່ອນໄຫວ ຂອງສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ວຽກງານອື່ນ ຕາມການສະເໜີຂອງແນວລາວສ້າງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 54 (ໃໝ່) ການພົວພັນລະຫວ່າງ ແນວລາວສ້າງຊາດ ກັບ ອົງການປົກຄອງທ້ອງຖິ່ນ**

ການພົວພັນລະຫວ່າງແນວລາວສ້າງຊາດກັບ ອົງການປົກຄອງທ້ອງຖິ່ນ ແມ່ນ ເພື່ອປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນ ກ່ຽວກັບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ.

ອົງການປົກຄອງທ້ອງຖິ່ນ ສ້າງເງື່ອນໄຂໃຫ້ແນວລາວສ້າງຊາດ ໄດ້ເຄື່ອນໄຫວຕາມພາລະບົດບາດຂອງຕົນ, ແຈ້ງທິດທາງວຽກງານ, ມະຕິກອງປະຊຸມ ຂອງອົງການປົກຄອງທ້ອງຖິ່ນ ໃຫ້ແນວລາວສ້າງຊາດ, ຕອບຂໍ້ຂ້ອງໃຈ ແລະ ຄຳສະເໜີຂອງແນວລາວສ້າງຊາດ ລວມທັງພາຄີຂອງແນວລາວສ້າງຊາດຂັ້ນທ້ອງຖິ່ນ.

ໃນກອງປະຊຸມສາມັນຄົບຄະນະປະຈຳປີຂອງຕົນ ແນວລາວສ້າງຊາດ ເຊີນຜູ້ຕາງໜ້າ ອົງການປົກຄອງທ້ອງຖິ່ນ ເຂົ້າຮ່ວມ, ໃນກໍລະນີມີຄວາມຈຳເປັນ ອົງການປົກຄອງທ້ອງຖິ່ນ ເຊີນຜູ້ຕາງໜ້າແນວລາວສ້າງຊາດເຂົ້າຮ່ວມກອງປະຊຸມຂອງຕົນ.

**ມາດຕາ 55 (ໃໝ່) ການພົວພັນ ລະຫວ່າງ ແນວລາວສ້າງຊາດ ກັບ ພາຄີ**

ການພົວພັນລະຫວ່າງແນວລາວສ້າງຊາດກັບ ພາຄີ ແມ່ນ ເພື່ອປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນກ່ຽວກັບ ການຊຸກຍູ້, ປຸກລະດົມປະຊາຊົນລາວບັນດາເຜົ່າ ໃນການເຕົ້າໂຮມຄວາມສາມັກຄີປອງດອງ, ການເຂົ້າຮ່ວມຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານແນວໂຮມ, ແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ.

**ມາດຕາ 56 (ໃໝ່) ການພົວພັນ ລະຫວ່າງ ແນວລາວສ້າງຊາດ ກັບ ປະຊາຊົນ**

ການພົວພັນ ລະຫວ່າງ ແນວລາວສ້າງຊາດແຕ່ລະຂັ້ນ ກັບ ປະຊາຊົນ ແມ່ນ ການເຕົ້າໂຮມຄວາມສາມັກຄີປອງດອງ, ປຸກລະດົມປະຊາຊົນລາວບັນດາເຜົ່າ, ຊັ້ນຄົນ, ສາສະໜາ, ເພດ, ໄວ ໃຫ້ນຳໃຊ້ສິດ ແລະ ປະຕິບັດພັນທະຂອງພົນລະເມືອງ ຕາມລັດຖະທຳມະນູນ ແລະ ກົດໝາຍ; ປົກປັກຮັກສາ ວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າ.

## ພາກທີ XI
## ວັນສ້າງຕັ້ງ, ທຸງ, ກາໝາຍ ແລະ ຕາປະທັບ ຂອງແນວລາວສ້າງຊາດ

**ມາດຕາ 57 (ປັບປຸງ) ວັນສ້າງຕັ້ງແນວລາວສ້າງຊາດ**

ວັນສ້າງຕັ້ງແນວລາວສ້າງຊາດ ແມ່ນ ວັນທີ 13 ສິງຫາ 1950.

ໃນແຕ່ລະປີ ແນວລາວສ້າງຊາດແຕ່ລະຂັ້ນ ຮ່ວມກັບປະຊາຊົນລາວບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ຈັດຕັ້ງສະເຫຼີມສະຫຼອງວັນດັ່ງກ່າວ ເພື່ອເພີ່ມທະວີຄວາມສາມັກຄີປອງດອງທົ່ວປວງຊົນ, ທວນຄືນເຖິງມູນເຊື້ອປະຫວັດສາດ ອັນສະຫງ່າອົງອາດ ແລະ ຜົນງານຂອງຕົນ.

**ມາດຕາ 58 (ປັບປຸງ) ທຸງ ແລະ ກາໝາຍ ຂອງແນວລາວສ້າງຊາດ**

ແນວລາວສ້າງຊາດມີທຸງ ແລະ ກາໝາຍ ຊຶ່ງຖືກຮັບຮອງເອົາໃນກອງປະຊຸມໃຫຍ່ຜູ້ແທນແນວລາວສ້າງຊາດທົ່ວປະເທດ.

**ມາດຕາ 59 (ປັບປຸງ) ຕາປະທັບຂອງແນວລາວສ້າງຊາດ**

ແນວລາວສ້າງຊາດແຕ່ລະຂັ້ນ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 60 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປຸກລະດົມ, ເຕົ້າໂຮມຄວາມສາມັກຄີປອງດອງ ທົ່ວປວງຊົນລາວທັງຊາດ ໃຫ້ເປັນປຶກແຜ່ນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 61 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດຕາມກົດໝາຍ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

**ມາດຕາ 62 (ປັບປຸງ) ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ຄະນະກໍາມະການສູນກາງແນວລາວສ້າງຊາດ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 63 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍແນວລາວສ້າງຊາດ ສະບັບເລກທີ 01/ສພຊ, ລົງວັນທີ 8 ກໍລະກົດ 2009.

ຂໍ້ກໍານົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້